ຊາວໜຸ່ມ ກວຕ ເຂົ້າຮ່ວມປະກອບສ່ວນບໍລິຈາກເລືອດ ເພື່ອຊ່ວຍເຫຼືອຊີວິດ ໃນໄລຍະທີ່ມີພະຍາດ Covod-
There are no translations available.
ໃນຕອນເຊົ້າຂອງວັນທີ 07 ເມສາ 2020, ທີ່ສູນ ບໍລິຈາກເລືອດກາແດງລາວ, ຊາວໜຸ່ມ
ກະຊວງວິທະຍາ ສາດ

ແລະ ເຕັກໂນໂລຊີ (ກວຕ) ໄດ້ປະກອບສ່ວນບໍລິຈາກເລືອດ ເພື່ອຊ່ວຍເຫຼືອຊີວິດ
ໃນໄລຍະທີ່ມີພະຍາດ Covod-19 ພວມລະບາດຢູ່ໃນປັດຈຸບັນ ຊຶ່ງນໍາໂດຍ ສະຫາຍ ຄໍາຜາ
ທອງວັນນາດ, ຮອງເລຂາຄະນະບໍລິຫານ ງານຊາວໜຸ່ມ ປະຊາຊົນປະຕິວັດລາວ, ກະຊວງວິທະຍາສາດ ແລະ
ເຕັກໂນໂລຊີ ພ້ອມດ້ວນຄະນະ.

ຈຸດປະສົງຂອງການບໍລິຈາກເລືອດໃນຄັ້ງນີ້,
ແມ່ນເພື່ອເປັນການສ້າງຂະບວນການຂ່ຳນັບຮັບຕ້ອນ ວັນ ສ້າງຕັ້ງພັກປະຊາຊົນປະຕິວັດລາວ
ຄົບຮອບ 65 ປີ, ວັນສ້າງຕັ້ງ ຄະນະຊາວໜຸ່ມປະຊາຊົນປະຕິວັດລາວ ຄົບຮອບ 65 ປີ ແລະ
ກອງປະຊຸມໃຫຍ່ ຄັ້ງທີ II ຂອງອົງຄະນະພັກ ກວຕ ທີ່ຈະໄຂຂຶ້ນໃນມໍ່ໆນີ້ໃຫ້ເປັນຂະບານການ
ຟົດຟື້ນຢ່າງຕໍ່ເນື່ອງ ແລະ ສາມາດປະກອບສ່ວນໃຫ້ເປັນຮູບປະທຳໃນການຊ່ວຍເຫຼືອສັງຄົມ.

ການບໍລິຈາກເລືອດ ແມ່ນວຽກງານມະນຸດສະທຳໜຶ່ງ
ທີ່ມີຄວາມຈຳເປັນເພື່ອຊ່ວຍກອບກູ້ເອົາຊີວິດ ເພື່ອນມະນຸດດ້ວຍກັນທີ່ຕ້ອງການເລືອດ ແລະ
ນອນປິ່ນປົວຢູ່ຕາມໂຮງໝໍແຫ່ງຕ່າງໆໃນຂອບເຂດທົ່ວປະເທດ ຊຶ່ງມີ ພະນັກງານ-ລັດຖະກອນ
ຕະຫຼອດເຖິງ ພໍ່ແມ່ປະຊາຊົນລາວບັນດາເຜົ່າທີ່ເຂົ້າຮັບການປິ່ນປົວດ້ວຍເລືອດ.

ມາຮອດປັດຈຸບັນ ເຖິງແມ່ນວ່າມີຫຼາຍພາກສ່ວນໄດ້ໃຫ້ຄວາມສຳຄັນ
ຕໍ່ການບໍລິຈາກເລືອດຢ່າງຕໍ່ເນື່ອງກໍຕາມ ແຕ່ຍ້ອນສະພາບການລະບາດຂອງພະຍາດອັກ
ເສບປອດສາຍພັນໃໝ່ (ໂຄວິດ-19)
ຈຶ່ງເຮັດໃຫ້ການອອກຮັບບໍລິຈາກເລືອດຕາມສະຖານທີ່ຕ່າງໆໃນຂອບເຂດທົ່ວປະເທດໄດ້ຖືກຢຸດຕິ
ຢ່າງຫຼີກລ້ຽງບໍ່ໄດ້; ຈຳນວນ ເລືອດທີ່ສະສົມໄວ້ກໍຫຼຸດລົງໃນແຕ່ລະມື້
 1 / 2

ຊາວໜຸ່ມ ກວຕ ເຂົ້າຮ່ວມປະກອບສ່ວນບໍລິຈາກເລືອດ ເພື່ອຊ່ວຍເຫຼືອຊີວິດ ໃນໄລຍະທີ່ມີພະຍາດ Covod-1
ແຕ່ຈຳນວນຄົນເຈັບທີ່ຕ້ອງການນຳໃຊ້ເລືອດເຂົ້າໃນການປິ່ນປົ່ວ
ແມ່ນມີເປັນຈຳນວນບໍ່ໜ້ອຍໃນແຕ່ລະວັນ ເຊັ່ນ: ຄົນເຈັບໃສ່ ເລືອດປະຈຳ (ພະຍາດທາລາເຊເມຍ),
ຟອກໄຂ່ຫຼັງ, ການຜ່າຕັດສຸກເສີນຕ່າງໆ, ອຸປະຕິເຫດ, ແມ່ຍິງຖືພາ ເກີດລູກທີ່ມີອາການສົນ
ແລະ ພະຍາດອື່ນໆ...ທີ່ມີຄວາມຈຳ ເປັນຕ້ອງການເລືອດ ທັງໝົດເຫຼົ່ານີ້
ແມ່ນມີຄວາມຈຳເປັນຕ້ອງມີເລືອດຕອບສະໜອງໃຫ້ທັນເວລາ ເພື່ອຊ່ວຍເຫຼືອຊີວິດຜູ້ປ່ວຍ.

ຂ່າວ: ບາລະຄອນ ສຸວັນນະພາສີ

ຮູບພາບ: ຊາວໜຸ່ມ ກວຕ
 2 / 2